


# ສະພາບການ ກ່ຽວກັບ ທີ່ດິນ ໃນພາກພື້ນແມ່ນ້ຳຂອງ

## ເນື້ອໃນສຳຄັນ

ບັນດາປະເທດໃນພາກພື້ນແມ່ນ້ຳຂອງ ລວມມີ ປະເທດ ກຳປູເຈຍ, ສປປ ລາວ, ມຽນມາ, ໄທ ແລະ ຫວຽດນາມ ກຳລັງຢູ່ທ່າມກາງການປ່ຽນແປງຢ່າງຊຸ້ນຊ້ຽວ ທາງດ້ານສັງຄົມ ແລະ ສິ່ງແວດລ້ອມ. ເຖິງແມ່ນວ່າ, ເຂດຕົວເມືອງຈະມີການຂະຫຍາຍຕົວກໍຕາມ, ແຕ່ເຫັນວ່າ ພາກສ່ວນອື່ນຂອງປະເທດ ສ່ວນໃຫຍ່ຍັງເປັນເຂດຊົນນະບົດຢູ່ ແລະ ປະຊາກອນ ຫຼາຍກວ່າ 60 ສ່ວນຮ້ອຍ ຂອງປະເທດ ແມ່ນຍັງອາໄສຢູ່ໃນເຂດຊົນນະບົດ ເຊິ່ງປະກອບອາຊີບໃນຂົງເຂດກະສິກຳເປັນຕົ້ນຕໍ. ປະຊາກອນເຫຼົ່ານີ້ ບໍ່ພຽງແຕ່ຈະຂະຫຍາຍຕົວຢ່າງຕໍ່ເນື່ອງ ແຕ່ຫາກຍັງມີລະດັບຄວາມທຸກຍາກທີ່ແຕກໂຕນກັນ. ໃນປັດຈຸບັນ, ຈຳນວນປະຊາຊົນຜູ້ທຸກຍາກ ທີ່ອາໄສຢູ່ລຽບຕາມພາກພື້ນແມ່ນ້ຳຂອງ ມີປະມານ 35 ລ້ານຄົນ ແລະ ສ່ວນໃຫຍ່ແມ່ນຊາວກະສິກອນ ທີ່ອາໄສຢູ່ຕາມເຂດຊົນນະບົດ. ບັນດາການລົງທຶນໃນຂະແໜງການທີ່ດິນ ແລະ ການເພີ່ມຂຶ້ນຂອງຜະລິດຕະພັນຈາກພືດກະສິກຳ ໄດ້ເຮັດໃຫ້ພາກພື້ນແມ່ນ້ຳຂອງ ກ້າວຂຶ້ນມາຢູ່ໃນແຖວໜ້າ ແລະ ກາຍເປັນຜູ້ນຳທາງດ້ານການຜະລິດ ແລະ ການຄ້າຂອງໂລກ ສຳລັບສິນຄ້າບໍລິໂພກຈຳນວນຫຼາຍ, ຂະນະດຽວກັນ ບັນດາກິດຈະກຳເຫຼົ່ານີ້ ຍັງເປັນປັດໄຈທີ່ເຮັດໃຫ້ເກີດມີການປ່ຽນແປງທາງດ້ານທີ່ດິນ ຢ່າງບໍ່ເຄີຍປະກົດມາກ່ອນ, ເນື່ອງມາຈາກການເພີ່ມຂຶ້ນຂອງການຜະລິດກະສິກຳ ໄດ້ເຂົ້າມາແທນທີ່ເນື້ອທີ່ປ່າໄມ້ ແລະ ລະບົບນິເວດທຳມະຊາດ. ໃນຂະນະທີ່ ສະພາບການຂອງການລົງທຶນໃນທົ່ວໂລກ ກຳລັງມີການຂະຫຍາຍຕົວໄວຂຶ້ນ ແລະ ການຄ້າຂາຍສິນຄ້າທີ່ຕິດພັນກັບການນຳໃຊ້ທີ່ດິນ ໄດ້ສົ່ງຜົນໃຫ້ແກ່ການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນຂອງປະເທດ (GDP) ແລະ ສ້າງຄວາມຮັ່ງມີໃຫ້ແກ່ບາງກຸ່ມຄົນໃນສັງຄົມເທົ່ານັ້ນ, ເຊິ່ງມັນໄດ້ກໍ່ໃຫ້ເກີດ ຄວາມບໍ່ເທົ່າທຽມກັນທາງສັງຄົມຢ່າງຈະແຈ້ງ. ຜົນໄດ້ຮັບຈາກການພັດທະນາສ່ວນໃຫຍ່ ແມ່ນມີພຽງກຸ່ມຄົນຮັ່ງມີໃນເຂດຕົວເມືອງເທົ່ານັ້ນ ທີ່ໄດ້ຮັບຜົນປະໂຫຍດ. ໃນຂະນະທີ່ ປະຊາຊົນຜູ້ທຸກຍາກຢູ່ເຂດຊົນນະບົດ ກາຍເປັນຜູ້ທີ່ຕ້ອງໄດ້ແບກຫາບພາລະທາງດ້ານຕົ້ນທຶນຂອງການພັດທະນາ ຍ້ອນສິ່ງເຫຼົ່ານີ້ໄດ້ຫັນປ່ຽນການນຳໃຊ້ທີ່ດິນໃນເຂດຊົນນະບົດ ແລະ ສ້າງຄວາມບໍ່ໝັ້ນຄົງຂອງການຄອບຄອງເນື້ອທີ່ດິນໃນຮູບແບບໃໝ່. ສະນັ້ນ, ເຂດພາກພື້ນແມ່ນ້ຳຂອງ ອາດມາເຖິງຈຸດຂີດສຸດ ທີ່ຕ້ອງມີການປ່ຽນແປງ. ການປ່ຽນແປງແບບຍຸດທະສາດ ແມ່ນມີຄວາມຈຳເປັນ ເພື່ອນຳໄປແກ້ໄຂ ແລະ ຕອບສະໜອງຄວາມຕ້ອງການຂອງຊາວກະສິກອນຂະໜາດນ້ອຍໄດ້ຢ່າງຍືນຍົງ. ເຫັນໄດ້ວ່າ ການຮັບຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບ ຂໍ້ມູນ ແລະ ຂ່າວສານ ທີ່ສະແດງເຖິງສະພາບການປ່ຽນແປງເຫຼົ່ານີ້ ແມ່ນມີຄວາມຈຳເປັນອັນເລັ່ງດ່ວນ ເພື່ອເຮັດໃຫ້ມີການຕັດສິນບັນຫາຢ່າງເປັນທຳ ແລະ ສາມາດນຳໄປສ້າງແຜນນະໂຍບາຍໄດ້ຢ່າງເໝາະສົມຍິ່ງຂຶ້ນ, ແລະ ພ້ອມທັງເຮັດໃຫ້ມີການຕິດຕາມກວດກາ ຜົນໄດ້ຮັບຈາກບັນດາການຕັດສິນໃຈເຫຼົ່ານີ້. ສະນັ້ນ, ປຶ້ມ ສະພາບການ ກ່ຽວກັບ ທີ່ດິນໃນເຂດພາກພື້ນແມ່ນ້ຳຂອງ ຈຶ່ງໄດ້ຮວບຮວມເອົາບັນດາຂໍ້ມູນ ແລະ ຂ່າວສານທີ່ສຳຄັນ ກ່ຽວກັບ ສະຖານະການທີ່ເກີດຂຶ້ນໃນປັດຈຸບັນ ແລະ ແນວທາງການປ່ຽນແປງ ຂອງຊັບພະຍາກອນທີ່ດິນ, ການແຈກຢາຍທາງດ້ານສັງຄົມ ແລະ ບັນດາເງື່ອນໄຂດ້ານການຄຸ້ມຄອງ ທີ່ສົ່ງຜົນໃຫ້ແກ່ການປ່ຽນແປງເຫຼົ່ານັ້ນ.

ໃນປັດຈຸບັນ ບັນດາປະເທດໃນພາກພື້ນແມ່ນ້ຳຂອງ ກຳລັງຢູ່ໃນໄລຍະ ທີ່ມີການປ່ຽນຜ່ານດ້ານກະສິກຳ, ໂຄງສ້າງທາງດ້ານເສດຖະກິດຂອງບັນດາປະເທດເຫຼົ່ານີ້ ໄດ້ຫັນຈາກການອີງໃສ່ພຽງແຕ່ການຜະລິດກະສິກຳເປັນຫຼັກໄປສູ່ຂະແໜງການອຸດສາຫະກຳ ແລະ ການບໍລິການ. ໃນທົດສະວັດທີ່ຜ່ານມາ, ການປະກອບສ່ວນຂອງຂະແໜງການກະສິກຳ ໃນລວມຍອດຜະລິດຕະພັນພາຍໃນຂອງປະເທດ (GDP) ແມ່ນຫຼຸດລົງໂດຍສະເລ່ຍ 24 ສ່ວນຮ້ອຍ. ເຖິງຢ່າງໃດກໍຕາມ, ອັດຕາສ່ວນຂອງຜູ້ອອກແຮງງານໃນຂະແໜງການກະສິກຳ ແມ່ນຫຼຸດລົງຊ້າກວ່າຫຼາຍ, ສະແດງໃຫ້ເຫັນວ່າ ການປ່ຽນແປງດັ່ງກ່າວ ແມ່ນເປັນໄປແບບບໍ່ສະໝໍ່າສະເໝີ ແລະ ຍິ່ງເຮັດໃຫ້ປະຊາຊົນ ທີ່ທຳການຜະລິດກະສິກຳຢູ່ຕາມເຂດຊົນນະບົດສ່ວນໃຫຍ່ ມີລັກສະນະຂະຫຍາຍຕົວຊ້າໃນຂະບວນການພັດທະນາປະເທດ. ເຖິງແມ່ນວ່າ, ການປະກອບສ່ວນຂອງຂະແໜງການກະສິກຳ ໃນການພັດທະນາເສດຖະກິດ ຈະມີອັດຕາສ່ວນທີ່ຫຼຸດລົງ ແຕ່ຂະແໜງການດັ່ງກ່າວ ກໍມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ທັງເປັນຕົວຂັບເຄື່ອນໃຫ້ແກ່ການປ່ຽນແປງຂອງການນຳໃຊ້ທີ່ດິນ ແລະ ການຂະຫຍາຍຕົວຢ່າງວ່ອງໄວ ຂອງການຜະລິດສິນຄ້າເພື່ອສົ່ງອອກ. ໃນລະຫວ່າງປີ 1996 ຫາ 2015, ເນື້ອທີ່ດິນກະສິກຳທັງໝົດໃນພາກພື້ນແມ່ນ້ຳຂອງ ໄດ້ເພີ່ມຂຶ້ນ 20 ສ່ວນຮ້ອຍ ຫຼື ປະມານ 9 ລ້ານເຮັກຕາ. ການຂະຫຍາຍຕົວດັ່ງກ່າວ ສ່ວນໃຫຍ່ແມ່ນນຳໃຊ້ຕົ້ນທຶນທາງຊັບພະຍາກອນທຳມະຊາດ ທີ່ມີຢູ່ຕາມເຂດພາກພື້ນ

ເຊັ່ນ: ການຫັນປ່ຽນເນື້ອທີ່ປ່າໄມ້ ແລະ ເນື້ອທີ່ປົກຫຸ້ມຂອງພືດພັນຕ່າງໆ ມີລັກສະນະເພີ່ມຂຶ້ນ. ໂດຍລວມແລ້ວ, ປ່າໄມ້ ຢູ່ໃນພາກພື້ນແມ່ນ້ຳຂອງ ແມ່ນຫຼຸດລົງປະມານ 4 ສ່ວນຮ້ອຍ ໃນຊ່ວງເວລາດັ່ງກ່າວ. ເຫັນໄດ້ວ່າ, ອັດຕາການຫຼຸດລົງຂອງປ່າໄມ້ ຢູ່ ປະເທດມຽນມາ ແລະ ກຳປູເຈຍ ແມ່ນເພີ່ມຂຶ້ນຢ່າງໄວວາ ເຊິ່ງມີການສູນເສຍເນື້ອທີ່ປ່າໄມ້ຫຼາຍກວ່າ 20 ສ່ວນຮ້ອຍ ຂອງອັດຕາການປົກຫຸ້ມຂອງປ່າໄມ້ໃນປະເທດດັ່ງກ່າວ. ກົງກັນຂ້າມ, ຢູ່ ສສ ຫວຽດນາມ ມີອັດຕາການເພີ່ມຂຶ້ນຂອງເນື້ອທີ່ປ່າໄມ້ ປະມານ 4 ລ້ານເຮັກຕາ, ແຕ່ສ່ວນໃຫຍ່ແມ່ນ ການປູກໄມ້ອຸດສາຫະກຳຮູບແບບຊະນິດພັນດຽວ.

ລັກສະນະການແຈກຢາຍ ຂອງຊັບພະຍາກອນທີ່ດິນໃນວຽກງານກະສິກຳ ມີຄວາມບໍ່ສະໝ່ຳສະເໝີໃນລະດັບທີ່ສູງ. ຄວາມບໍ່ເທົ່າທຽມກັນ ຂອງການຄອບຄອງທີ່ດິນກະສິກຳ ຂອງ ຊາວກະສິກອນຂະໜາດນ້ອຍຢູ່ຫວຽດນາມ ແມ່ນກວມເອົາອັດຕາສ່ວນທີ່ສູງ, ໃນ 10 ສ່ວນຮ້ອຍ ຂອງຄອບຄົວຊາວກະສິກອນ ຜູ້ທີ່ມີເນື້ອທີ່ດິນໃນການເຮັດການຜະລິດສູງສຸດ ມີການຖືຄອງເນື້ອທີ່ດິນ ເກືອບ 40 ສ່ວນຮ້ອຍຂອງທີ່ດິນກະສິກຳ. ເຖິງແນວໃດກໍຕາມ, ທີ່ດິນກະສິກຳ ຂອງຊາວກະສິກອນຂະໜາດນ້ອຍ ໄດ້ຖືກຮວບຮວມເຂົ້າກັນນັບມື້ນັບຫຼາຍຂຶ້ນ ເພື່ອສະໜອງເນື້ອທີ່ໃຫ້ແກ່ການສຳປະທານ ທີ່ລັດອະນຸມັດໃຫ້ແກ່ ບັນດາບໍລິສັດທີ່ເຮັດທຸລະກິດ ແລະ ການລົງທຶນດ້ານກະສິກຳ. ການສຳປະທານທີ່ດິນ ສະເພາະໃນຂະແໜງການກະສິກຳ ແລະ ປ່າໄມ້ ແມ່ນກວມເອົາເນື້ອທີ່ຢ່າງໜ້ອຍ 4 ລ້ານເຮັກຕາ ໃນເຂດພາກພື້ນແມ່ນ້ຳຂອງ, ແລະ ການສຳປະທານໃນທຸກໆຂະແໜງການ ອາດກວມເອົາປະມານ 14 ລ້ານເຮັກຕາ. ເມື່ອທົບທວນຂໍ້ມູນດັ່ງກ່າວແລ້ວ, ເຫັນວ່າການແຈກຢາຍຂອງເນື້ອທີ່ດິນກະສິກຳ ມີລັກສະນະບໍ່ເທົ່າທຽມກັນ ໂດຍສະເພາະແມ່ນຢູ່ ປະເທດ ກຳປູເຈຍ.

ປັດໄຈຂັບເຄື່ອນທີ່ສຳຄັນຂອງການປ່ຽນແປງຂອງເນື້ອທີ່ດິນກະສິກຳ ແລະ ການຂະຫຍາຍຕົວແບບກ້າວກະໂດດ ຂອງການສຳປະທານທີ່ດິນໃນພາກພື້ນແມ່ນ້ຳຂອງ ແມ່ນການຜະລິດພືດເສດຖະກິດຕາມຄວາມນິຍົມ ທີ່ເພີ່ມຂຶ້ນ- ໄດ້ແກ່ ມັນຕົ້ນ, ສາລີ, ອ້ອຍ, ຢາງພາລາ ແລະ ປາມນ້ຳມັນ. ປັດຈຸບັນ, ການຜະລິດພືດເສດຖະກິດເຫຼົ່ານີ້ ກວມເອົາ 30 ສ່ວນຮ້ອຍ ຂອງເນື້ອທີ່ດິນກະສິກຳທັງໝົດໃນພາກພື້ນແມ່ນ້ຳຂອງ ຫຼື ມີເນື້ອທີ່ທັງໝົດຫຼາຍເຖິງ 17 ລ້ານເຮັກຕາ. ການເພີ່ມຂຶ້ນຂອງການຜະລິດພືດເສດຖະກິດເຫຼົ່ານີ້ ແມ່ນຕິດພັນກັນຢ່າງໃກ້ຊິດ ກັບການເພີ່ມອັດຕາການຂະຫຍາຍຕົວດ້ານການຄ້າ ຂອງຜະລິດຕະພັນດັ່ງກ່າວໃນລະດັບສາກົນ ແລະ ສິນຄ້າອື່ນໆ ທີ່ຜະລິດມາຈາກການນຳໃຊ້ທີ່ດິນເປັນຫຼັກ; ການຄ້າສຳລັບສິນຄ້າເຫຼົ່ານີ້ ລະຫວ່າງບັນດາປະເທດໃນພາກພື້ນແມ່ນ້ຳຂອງດ້ວຍກັນ ແລະ ການສົ່ງອອກ ຈາກພາກພື້ນດັ່ງກ່າວ ໄປສູ່ ສປ ຈີນ ກໍເພີ່ມຂຶ້ນເຖິງສາມເທົ່າ ຈາກ 37 ຕື້ໂດລາສະຫະລັດ ໃນປີ 1996 ເປັນ 118 ຕື້ໂດລາສະຫະລັດ ໃນປີ 2015.

ບາດກ້າວ ແລະ ຂະໜາດຂອງການປ່ຽນແປງເຫຼົ່ານີ້ ໄດ້ຖ່ວງດຶງຂີດຄວາມສາມາດຂອງໜ່ວຍງານທາງພາກລັດ ໃນການຄຸ້ມຄອງທີ່ດິນໃຫ້ມີປະສິດທິພາບ ແລະ ເທົ່າທຽມກັນ, ທັງສະແດງໃຫ້ເຫັນເຖິງບັນດາຂໍ້ຄົງຄ້າງ ໃນຂອບເຂດທາງດ້ານນິຕິກຳທີ່ມີຢູ່ໃນປັດຈຸບັນ ກ່ຽວກັບ ຄວາມໝັ້ນຄົງດ້ານສິດ ໃນການຖືຄອງທີ່ດິນຢູ່ໃນເຂດຊົນນະບົດ ລວມທັງ ປະຊາຊົນທີ່ອາໄສການຜະລິດກະສິກຳເປັນສ່ວນໃຫຍ່. ໃນຂະນະທີ່, ບັນດານະໂຍບາຍ ແລະ ນິຕິກຳຂອງແຕ່ລະປະເທດມີຄວາມແຕກຕ່າງກັນ, ບັນຫາທີ່ຄ້າຍຄືກັນ ຂອງບັນດາປະເທດໃນພາກພື້ນ ກໍຄືຊ່ອງຫວ່າງລະຫວ່າງ ບັນດານະໂຍບາຍ ແລະ ກົດໝາຍເຫຼົ່ານີ້ ແລະ ການຈັດຕັ້ງປະຕິບັດຕົວຈິງໃນການຄຸ້ມຄອງທີ່ດິນ. ເຖິງແມ່ນວ່າ ຈະມີການປະຕິຮູບດ້ານຕ່າງໆ, ແຕ່ປະກົດການສໍ້ລາດບັງຫຼວງໃນແຕ່ລະປະເທດ ກໍຍັງຖືວ່າ ເປັນບັນຫາທີ່ທ້າທາຍທີ່ສຸດໃນການແກ້ໄຂຢ່າງຕໍ່ເນື່ອງ.

ພາກພື້ນແມ່ນ້ຳຂອງ ຈຶ່ງກ້າວມາເຖິງຈຸດທີ່ຈຳເປັນຕ້ອງ ມີການກຳນົດແນວທາງ ແລະ ການຕັດສິນໃຈ ທີ່ຮັດກຸມ, ທົ່ວເຖິງຢ່າງເປີດກວ້າງ ແລະ ມີຄວາມຮັບຜິດຊອບຢ່າງຮີບດ່ວນ. ແນວທາງຂອງການປ່ຽນແປງໃນຕໍ່ໜ້າ ແມ່ນຂຶ້ນກັບລະດັບການປ່ຽນແປງຂອງແຕ່ລະປັດໄຈ ເພື່ອເບິ່ງວ່າ ປັດໄຈດ້ານໃດ ຈະສາມາດເພີ່ມແຮງກະຕຸ້ນໃນສ້າງຜົນປະໂຫຍດ ໃຫ້ແກ່ປະຊາຊົນສ່ວນໃຫຍ່ທີ່ຢູ່ໃນເຂດຊົນນະບົດ ແລະ ອາໄສການຜະລິດກະສິກຳ ແທນການເອື້ອປະໂຫຍດໃຫ້ຄົນສ່ວນໜ້ອຍ ຄືໄລຍະຜ່ານມາ. ການພັດທະນາໃນພາກພື້ນດັ່ງກ່າວນີ້ ຈະສາມາດສືບຕໍ່ ກ້າວໄປສູ່ການພັດທະນາແບບຍືນຍົງ ແລະ ມີລັກສະນະທົ່ວເຖິງໃຫ້ຫຼາຍຍິ່ງຂຶ້ນ ໄດ້ ຫຼື ບໍ່ນັ້ນ, ສິ່ງເຫຼົ່ານີ້ ຍັງຄົງເປັນຄຳຖາມທີ່ຕ້ອງການຄຳຕອບ ເຊິ່ງຄຳຕອບນັ້ນ ຈະສາມາດນຳໄປກຳນົດແບບແຜນ ສຳລັບການຄຸ້ມຄອງທີ່ດິນ ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໃນພາກພື້ນແມ່ນ້ຳຂອງແຫ່ງນີ້ໃນອະນາຄົດ.

**Produced by:**

UNIVERSITÄT BERN
CDE
CENTRE FOR DEVELOPMENT AND ENVIRONMENT

MRLG
MEKONG REGION LAND GOVERNANCE

The State of Land in the Mekong Region is a production of the Centre for Development and Environment (CDE), University of Bern, and the Mekong Region Land Governance (MRLG) Project.

**Citation for the full report:**
Ingalls, M.L., Diepart, J.-C., Truong, N., Hayward, D., Neil, T., Phomphakdy, C., Bernhard, R., Fogarizzu, S., Epprecht, M., Nanhthavong, V., Vo, D.H., Nguyen, D., Nguyen, P.A., Saphangthong, T., Inthavong, C., Hett, C. and Tagliarino, N. 2018. *State of Land in the Mekong Region*. Centre for Development and Environment, University of Bern and Mekong Region Land Governance. Bern, Switzerland and Vientiane, Lao PDR, with Bern Open Publishing.